ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----------=====000=====----------

ກະຊວງການເງິນ

ກົມພາສີ

ເລກທີ:.00620...../ກພສ.

ນະຄອນຫຼວງວຽງຈັນ, ວັນທີ:.2 8 OCT 2015ໂ.

# ແຈ້ງການແນະນຳ

ເຖິງ : - ດ່ານພາສີສາກົນຂົວມິດຕະພາບ IV.
- ດ່ານພາສີສາກົນບໍ່ເຕັນ
- ກອງກວດກາພາສີປະຈຳແຂວງບໍ່ແກ້ວ ແລະ ແຂວງຫລວງນ້ຳທາ

ເລື່ອງ : ການຄຸ້ມຄອງນ້ຳມັນເຊື້ອໄຟ ຜ່ານແດນສາກົນ ຜ່ານດ່ານພາສີສາກົນບ້ານມອມ, ເມືອງຕົ້ນເຜີ້ງ ແຂວງບໍ່ແກ້ວ.

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບປັບປຸງເລກທີ: 04/ສພຊ, ລົງວັນທີ: 20 ທັນວາ 2011 ແລະ ສະບັບປັບປຸງບາງມາດຕາ ເລກທີ: 57/ສພຊ, ລົງວັນທີ: 24 ທັນວາ 2014.
- ອີງຕາມ ຂໍ້ຕົກລົງຂອງເຈົ້າແຂວງ ບໍ່ແກ້ວສະບັບເລກທີ 1669/ຈຂ.ບກ, ລົງວັນທີ 0 ຕຸລາ 2015 ວ່າດ້ວຍການອະນຸມັດໃຫ້ບໍລິສັດ ຊົບປິ້ງສິນຄ້າຜ່ານແດນ ແອລເອສ ຈຳກັດ ນຳເຂົ້ານ້ຳມັນເຊື້ອໄຟ ຈາກປະເທດໄທ ຜ່ານດ່ານພາສີສາກົນ ຂົວມິດຕະພາບ 4 ໄປປະເທດທີ 3.
- ອີງຕາມບົດລາຍງານຂອງກົມພາສີ ສະບັບເລກທີ 00560/ກພສ ລົງວັນທີ 26/10/2015.
- ອີງຕາມທິດຊີ້ນຳຂອງທ່ານ ລັດຖະມົນຕີຊ່ວຍວ່າການກະຊວງການເງິນຄັ້ງວັນທີ 26/10/2015.

ໃນໄລຍະທີ່ ສປ ຈີນ ໄດ້ໂຈະການນຳເຂົ້ານ້ຳມັນເຊື້ອໄຟຜ່ານດ່ານພາສີສາກົນບໍ່ເຕັນ, ເພື່ອຮັບປະກັນໃນການຄຸ້ມຄອງນ້ຳມັນເຊື້ອໄຟຜ່ານແດນສາກົນ ຂອງບັນດາບໍລິສັດ ໃຫ້ມີຄວາມຮັດກຸມ, ກົມພາສີອອກແຈ້ງການແນະນຳ, ຄື :

1. ມອບໃຫ້ດ່ານພາສີສາກົນຂົວມິດຕະພາບ IV ແລະ ດ່ານພາສີສາກົນບໍ່ເຕັນ ປະສານສົມທົບກັນ ໃນການຄຸ້ມຄອງນ້ຳມັນຜ່ານແດນສາກົນ ລະຫວ່າງດ່ານພາສີຕົ້ນທາງ (ດ່ານພາສີບ້ານມອມ ເມືອງຕົ້ນເຜີ້ງ) ແລະ ດ່ານປາຍທາງ (ດ່ານຊຽງກົກ ແຂວງຫລວງນ້ຳທາ ) ຢ່າງເຂັ້ມງວດ ແລະ ຮັດກຸມ ຕາມບົດລາຍງານຂອງດ່ານພາສີຂົວມິດຕະພາບ IV ສະບັບເລກທີ 0955/ພສ.ຂມພ 4, ລົງວັນທີ 28 ກັນຍາ 2015. ໃນກໍລະນີທີ່ມີການຂົນສົ່ງນ້ຳມັນຜ່ານແດນສາກົນ ໄປທາງເຮືອ ກໍ່ໃຫ້ປະຕິບັດເຊັ່ນດຽວກັນ.
2. ນ້ຳມັນເຊື້ອໄຟຜ່ານແດນສາກົນ, ທາງບົກແລະທາງເຮືອ, ໃຫ້ຈັດເກັບຄ່າທຳນຽມ 350.000 ກີບ/ຖັງວຄັນ ຕາມແຈ້ງການຂອງກະຊວງການເງິນສະບັບເລກທີ 2402/ກງ, ລົງວັນທີ 17.7.2015 ຢ່າງເຂັ້ມງວດ.

3. ມອບໃຫ້ດ່ານພາສີສາກົນຂົວມິດຕະພາບIV, ດ່ານພາສີສາກົນບໍ່ເຕັນ ແລະ ກອງກວດກາປະຈຳແຂວງບໍ່ແກ້ວ, ແຂວງຫລວງນໍ້າທາ ປະສານສົມທົບກັນຄຸ້ມຄອງນໍ້າມັນເຊື້ອໄຟຜ່ານແດນສາກົນດັ່ງກ່າວ ເພື່ອຈຳກັດບັນດາຊ່ອງຫ່ວາງ ບໍ່ໃຫ້ມີການຮົ່ວໄຫລ, ໃນການຈັດຕັ້ງປະຕິບັດຕົວຈິງ ຖ້າພົບຄວາມຫຍຸ້ງຍາກ ໃຫ້ລາຍງານໄປຍັງກົມພາສີ ເພື່ອຂໍທິດຊີ້ນຳ.
4. ແຈ້ງການແນະນຳສະບັບດັ່ງກ່າວ ແມ່ນໃຫ້ຈັດຕັ້ງປະຕິບັດຮອດວັນທີ 31/12/2015, ຈາກນັ້ນໃຫ້ບັນດາດ່ານພາສີ ແລະ ກອງກວດກາ ສະຫລຸບລາຍງານການຈັດຕັ້ງປະຕິບັດ ໃຫ້ກົມພາສີ.

ຫົວໜ້າກົມພາສີ

ບຸນປະເສີດ ສີງຸນລະບຸດ

<u>ບ່ອນສົ່ງ</u> :

- ທ່ານລັດຖະມົນຕີວ່າການກະຊວງການເງິນ — 1 ສະບັບ "ເພື່ອຊາບແລະມີທິດຊີ້ນຳ"
- ທ່ານລັດຖະມົນຕີຊ່ວຍວ່າການກະຊວງການເງິນ, ຜູ້ຊີ້ນຳ — 1 ສະບັບ "ເພື່ອຊາບແລະມີທິດຊີ້ນຳ"
- ພະແນກຄຸ້ມຄອງກວດກາພາສີແລະຕ້ານການການຄ້າຂາຍເຖື່ອນ II — 1 ສະບັບ "ເພື່ອຕິດຕາມກວດກາ"
- ເກັບມ້ຽນສຳເນົາ — 1 ສະບັບ